ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊຍະບູລີ
ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ: 6043/ກສຂ
ໄຊຍະບູລີ, ວັນທີ 09 ກັນຍາ 2026

# ໜັງສືແຈ້ງເຊີນປະມູນ

- ອີງຕາມ ຂໍ້ຕົກລົງ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 1432/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ, ແຂວງ;
- ອີງຕາມ ສັນຍາເງິນກູ້ຢືມເລກທີ: ADB Loan 3817-LAO, ສັນຍາເງິນຊ່ວຍເຫຼືອລ້າເລກທີ: ADB Grant 0659-LAO (SF), ສັນຍາເງິນຊ່ວຍເຫຼືອລ້າເລກທີ: EU Grant 0660-LAO (EF) ແລະ ສັນຍາເງິນຊ່ວຍເຫຼືອລ້າເລກທີ: GAFSP Grant 0912-LAO (EF).

**ຊື່ຊຸດການປະມູນ/ສັນຍາ:** ກໍ່ສ້າງ - ສ້ອມແປງຊົນລະປະທານນ້ຳປອນ, ເມືອງປາກລາຍ, ແຂວງໄຊຍະບູລີ.
**ເລກທີອ້າງອີງ:** **OP3-CW17**

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ທຶນຈາກທະນາຄານພັດທະນາອາຊີເພື່ອໃຊ້ຈ່າຍສຳລັບໂຄງການ ພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (SRIWSM) ແລະ ມີຈຸດປະສົງນຳໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍຂອງສັນຍາກໍ່ສ້າງ - ສ້ອມແປງຊົນລະປະທານນ້ຳປອນ, ເມືອງປາກລາຍ, ແຂວງໄຊຍະບູລີ (ສັນຍາເລກທີ: OP3-CW17).
2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງໄຊຍະບູລີ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນຊອງປະມູນສຳລັບ ຟື້ນຟູສ້ອມແປງລະບົບຄອງເໝືອງຊົນລະປະທານຊົນລະປະທານນ້ຳປອນ, ເມືອງປາກລາຍ, ແຂວງໄຊຍະບູລີ (ສັນຍາເລກທີ: OP3-CW17), ໄລຍະກໍ່ສ້າງ 12 ເດືອນ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ໂດຍປະກາດ ຜ່ານສື່ພາຍໃນປະເທດ ຕາມທີ່ໄດ້ລະບຸໄວ້ໃນນະໂຍບາຍ ແລະ ລະບຽບການຈັດຊື້-ຈັດຈ້າງ ຂອງທະນາຄານພັດທະນາອາຊີ (ປີ 2017, ແລະ ສະບັບທີ່ປັບປຸງເປັນໄລຍະ) ແລະ ເປີດໃຫ້ທຸກໆຜູ້ປະມູນທີ່ມີຄວາມເໝາະສົມ ຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນ ເອກະສານປະມູນ.
4. ຜູ້ປະມູນສາມາດເບິ່ງເງື່ອນໄຂຄວາມເໝາະສົມ ແລະ ດ້ານຄຸນນະວຸທິໃນເອກະສານປະມູນ.
   - ລາຍຮັບສະເລ່ຍຈາກການກໍ່ສ້າງ: ຢ່າງໜ້ອຍ 440,000 ໂດລາສະຫະລັດ ຕາມທີ່ກຳນົດໃນເອກະສານປະມູນ, ຄິດໄລ່ເປັນການຈ່າຍເງິນທີ່ໄດ້ຮັບການຮັບຮອງທັງໝົດທີ່ໄດ້ຮັບສຳລັບສັນຍາທີ່ສຳເລັດ ຫຼື ກຳລັງດຳເນີນຢູ່ໃນໄລຍະ 3 ປີລ່າສຸດ (2023 - 2025). ຖ້າເປັນຜູ້ປະມູນທຸລະກິດຮ່ວມ ທຸກໆພາກສ່ວນຮ່ວມກັນ ຕ້ອງຜ່ານເງື່ອນໄຂ 100%.

- ປະສົບການ: ຢ່າງໜ້ອຍ 1 ໂຄງການກໍ່ສ້າງຂອງສັນຍາທີ່ຄ້າຍຄືກັນ ທີ່ເຊັນສັນຍາ ແລະ ສໍາເລັດໄປແລ້ວເປັນສ່ວນໃຫຍ່ໃນນາມເປັນຜູ້ຮັບເໝົາຫຼັກ, ສະມາຊິກຂອງບໍລິສັດຮ່ວມທຸລະກິດ ຫຼື ຜູ້ຮັບເໝົາຊ່ວງຕໍ່ ນັບຕັ້ງແຕ່ວັນທີ 1 ມັງກອນ 2021 ແລະ ກໍານົດວັນຍື່ນຊອງປະມູນ, ມີມູນຄ່າສັນຍາຢ່າງໜ້ອຍ 360,000 ໂດລາສະຫະລັດ.
- ເງື່ອນໄຂອື່ນໆແມ່ນກໍານົດໃນ ເອກະສານປະມູນ.

5. ຜູ້ປະມູນທີ່ມີຄວາມເໝາະສົມສາມາດພົວພັນເອົາຂໍ້ມູນ ແລະ ກວດກາເບິ່ງເອກະສານປະມູນ ຢູ່ທີ່ຢູ່ຂ້າງລຸ່ມ ໃນໂມງລັດຖະການ. ໃນກໍລະນີທີ່ພົບຄວາມຫຍຸ້ງຍາກໃນການພົວພັນເອົາຂໍ້ມູນ ແລະ ກວດກາເບິ່ງເອກະສານປະມູນ, ຜູ້ປະມູນ ສາມາດສອບຖາມຜ່ານທາງ ອີເມລ: keomany787@gmail.com.
   ຜູ້ປະມູນທີ່ມີຄວາມເໝາະສົມ ແລະ ສົນໃຈ ສາມາດຍື່ນໜັງສືສະເໜີຂໍຊື້ເອກະສານປະມູນຄົບຊຸດເປັນພາສາລາວ, ໃນມູນຄ່າ 100 ໂດລາສະຫະລັດ ດ້ວຍການຈ່າຍເປັນເງິນສົດ ຫຼື ໂອນເຂົ້າບັນຊີໂຄງການ ພຊຄ: ເລກທີບັນຊີ 120-11-010-182630-001. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນສາຂາແຂວງໄຊຍະບູລີ.
6. ຊອງປະມູນຈະຕ້ອງສົ່ງ ໃນວັນທີ ຫຼື ກ່ອນມື້ເປີດຊອງ ວັນທີ 14 ຕຸລາ 2026 ເວລາ 09 ໂມງ 00 ນາທີ ທີ່ຫ້ອງປະຊຸມໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງໄຊຍະບູລີ. ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ການປະມູນຈະເປີດຕໍ່ສາທາລະນະ ໂດຍຊ້ອງໜ້າ ຄະນະກໍາມະການ ຈັດຊື້-ຈັດຈ້າງ, ຕົວແທນຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນທີ່ມີຄວາມສົນໃຈ ຢູ່ສະຖານທີ່ໆກໍານົດໄວ້ຂ້າງລຸ່ມນີ້.
7. ເອກະສານຈະຕ້ອງປະກອບໜັງສື " ການຄໍ້າປະກັນການປະມູນດ້ວຍກງດ ".
8. ທີ່ຢູ່ທີ່ເວົ້າເຖິງຢູ່ຂ້າງເທິງນີ້ແມ່ນ:

ຫ້ອງປະຊຸມຂອງ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງໄຊຍະບູລີ. ບ້ານນາໄຮ, ເມືອງໄຊຍະບູລີ, ແຂວງໄຊຍະບູລີ, ສປປ ລາວ.

ເບີໂທລະສັບ +856 20 22894460

ອີເມລ: keomany787@gmai.com

ຫົວໜ້າພະແນກ

ພະແນກ ກະສິກໍາ ແລະ ສິ່ງແວດລ້ອມ

ປອ. ສົມພັນ ເພັງສີດາ

PhD. Somphanh PHENGSIDA